# Mekong River Commission

P.O. Box 6101, Vientiane 01000, Lao PDR
Telephone: (856-21) 263 263 Facsimile: (856-21) 263 264
Email: mrcs@mrcmekong.org Website: www.mrcmekong.org

10th Anniversary
5 April 1995 - 5 April 2005

## ຮ່າງບົດອອກຂ່າວ

ຄມສ No. 10/06

# ປະເທດແດນມາກໃຫ້ການຊ່ວຍເຫຼືອ ຈຳນວນເງິນ US$9 ລ້ານ ໃນໂຄງການຮັກສາສິ່ງແວດລ້ອມ ແລະ ແຜນງານພັດທະນາ ອ່າງແມ່ນ້ຳຂອງ

**ວຽງຈັນ, ສປປ ລາວ**
**ວັນທີ່ 6 ເດືອນ ທັນວາ, ປີ 2006**

ຄະນະກຳມາທິການແມ່ນ້ຳຂອງສາກົນ (ຄມສ) ແລະ ລັດຖະບານ ແຫ່ງລາດຊະອານາຈັກ ແດນມາກ ມື້ນີ້ ໄດ້ຕົກລົງເຊັນສັນຍາ ໃຫ້ທຶນຊ່ວຍເຫຼືອ ຈຳນວນເງິນ 52.5 ລ້ານ ໂກຼເນີແດນມາກ (ປະມານ 9 ລ້ານ ໂດລາອາເມກາ) ເພື່ອສະໜັບສະໜູນໂຄງການ ໄລຍະສອງ ຂອງ ແຜນພັດທະນາອ່າງ (BDP2) ຂອງ ຄມສ ແລະ ເພື່ອສືບຕໍ່ແຜນວຽກຂອງໂຄງການຮັກສາສິ່ງເວດລ້ອມ.

ລົງນາມໃນຂໍ້ຕົກລົງໃຫ້ທຶນຊ່ວຍເຫຼືອໃນຄັ້ງນີ້ ໂດຍແມ່ນ ພະນະທ່ານ ປີເຕີ ລີຊອລທ ແຮນເຊີນ (Mr Peter Lysholt Hansen) ເອກອັກຄະລະຊະທູດ ແຫ່ງປະເທດແດນມາກ ທີ່ຫວຽດນາມ ແລະ ດຣ ໂອລີເວຍ ໂຄເກນ (Dr Olivier Cogels), ຫົວໜ້າບໍລິຫານ ຄມສ ເຊິ່ງໄດ້ເຊັນກັນທີ່ ສຳນັກງານໃຫຍ່ ຄມສ ທີ່ ວຽງຈັນ. ພາຍໄຕ້ເງື່ອນໄຂ ໃຫ້ທຶນຊ່ວຍເຫຼືອດັ່ງກ່າວ, ເງິນຈຳນວນ 45 ລ້ານ ໂກຼເນີ ແມ່ນຈະຖືກນຳໃຊ້ເຂົ້າໃນ ແຜນພັດທະນາອ່າງໄລຍະສອງ ແລະ 7.5 ລ້ານ ໂກຼເນີ ແມ່ນຈະຖືກນຳໃຊ້ເພື່ອ ໂຄງການຮັກສາສິ່ງ ເວດລ້ອມຂອງ ຄມສ. ການໃຫ້ ການຊ່ວຍເຫຼືອຈະສືບຕໍ່ໄປຈົນຮອດປີ 2010.

ທັງສອງໂຄງການ, ແຜນການພັດທະນາອ່າງ ແລະ ໂຄງການຮັກສາສິ່ງເວດລ້ອມ, ແມ່ນໂຄງການ ພາຍໄຕ້ສັນຍາ ປີ 1995 ກ່ຽວກັບ ການຮ່ວມມື ເພື່ອການພັດທະນາອ່າງແມ່ນ້ຳຂອງແບບຍືນຍົງ, ເຊິ່ງເປັນຈຸດກຳເນີດຂອງອົງການແມ່ນ້ຳຂອງ ສາກົນ.

ໂຄງການພັດທະນາອ່າງໄລຍະສອງ ຈະເປັນການສ້າງແຜນພັດທະນາຮ່ວມ ເຊິ່ງລວມເອົາຮູບແບບການພັດທະນາອ່າງ ໂດຍການນຳໃຊ້ນ້ຳ ແລະ ຊັບພະຍາກອນຮ່ວມກັນ ໂດຍມີຈຸດປະສົງ ເພື່ອຄຸ້ມຄອງ ແລະ ພັດທະນາ ບັນດາແຫຼ່ງນ້ຳ ແລະ ຊັບພະຍາກອນເຫຼົ່ານັ້ນ ໃຫ້ ມີລັກສະນະສົມດຸນ, ຍືນຍົງ ແລະ ສົມບູນ ເພື່ອຜົນປະໂຫຍດຮ່ວມກັນຂອງບັນດາປະເທດ ສະມາຊິກ ຄມສ.
ໃນໄລຍະສອງ ຂອງແຜນພັດທະນາອ່າງ ແມ່ນຈະມີການສືບຕໍ່ປັບປຸງຖານຄວາມຮູ້ ແລະ ອຸປະກອນຊ່ວຍປະເມີນຜົນ ແລະ ເຮັດໃຫ້ມີການ ນຳໃຊ້ ທີ່ມີປະສິດທິຜົນຕໍ່ທັງ ຄະນະກຳມາທິການແມ່ນ້ຳຂອງສາກົນ ແລະ ຄະນະກຳມະການແມ່ນ້ຳຂອງ ແຫ່ງຊາດ. ແຜນການຍັງລວມມີ ການສ້າງຄວາມອາດສາມາດ ໃນລະດັບ ຄະນະກຳມາທິການແມ່ນ້ຳຂອງສາກົນ ແລະ ຄະນະກຳມະການ ແມ່ນ້ຳຂອງແຫ່ງຊາດ ກ່ຽວກັບ ແຜນການຄຸ້ມຄອງແຫຼ່ງຊັບພະຍາກອນທາງນ້ຳແບບສົມບູນ (IWRM).

ໂດຍການນຳໃຊ້ ເຄື່ອງມືການຄິດໄລ່ທີ່ທັນສະໃໝ, ຄະນະກຳມາທິການແມ່ນ້ຳຂອງສາກົນ ຈະສາມາດວິເຄາະ ກ່ຽວກັບ ຜົນປະໂຫຍດ ແລະ ຜົນກະທົບ ຂອງການປະສົມປະສານ ການພັດທະນາລະບົບຊົນລະປະທານ ແລະ ລະບົບພລັງ ໄຟຟ້າ ເພື່ອເຮັດໃຫ້ບັນດາປະເທດສະມາຊິກ ສາມາດບັນລຸຜົນປະໂຫຍດຮ່ວມກັນ ແລະ ເປັນທີ່ເພິ່ງພໍໃຈຂອງທຸກຝ່າຍ ແລະ ເຮັດໃຫ້ພວກເຂົາ ຮ່ວມກັນປັບປຸງແຫຼ່ງນ້ຳ

ເພື່ອຄຸ້ມຄອງໄພແລ້ງ, ລະບົບຊົນລະປະທານ ແລະ ໄພນໍ້າຖ້ວມ. ໃນໂຄງການ ພັດທະນາອ່າງ ແມ່ນຍັງລວມມີການພັດທະນາ, ການໃຫ້ບຸລິມະສິດ, ແລະ ການສົ່ງເສີມ ຄະນະຮັບຜິດຊອບໂຄງການ ແລະ ແຜນງານຕ່າງໆ ຂອງບັນດາປະເທດສະມາຊິກ.

ພາລະບົດບາດຂອງໂຄງການຮັກສາສິ່ງເວດລ້ອມ ແມ່ນເພື່ອໃຫ້ມີຄວາມສົມດຸນລະຫວ່າງ ການພັດທະນາເສດຖະກິດ ແລະ ການປົກປັກຮັກສາສິ່ງເວດລ້ອມ ເພື່ອຮັບປະກັນຄວາມອຸດົມສົມບູນຂອງອ່າງແມ່ນໍ້າຂອງ ແລະ ຈະນໍາໃຊ້ ທຶນຊ່ວຍເຫຼືອຂອງ ແດນມາກດັ່ງກ່າວ ເພື່ອຂະຫຍາຍວຽກງານ ກ່ຽວກັບການໃຫ້ຂໍ້ມູນຂ່າວສານ ສະພາບການປ່ຽນແປງ ຄຸນນະພາບ ການຕົກ ຕະກອນຂອງນໍ້າ, ສະພາບຄວາມສົມດຸນຂອງຊີວິດສັດນໍ້າ ແລະ ເງື່ອນໄຂ ດ້ານເສດຖະກິດສັງຄົມ. ຈະມີການສ້າງລະບົບ ການເຕືອນ ໄພດ້ານສິ່ງເວດລ້ອມ ຢ່າງກ້ວາງຂວາງໃນອ່າງ ແລະ ຈະສືບຕໍ່ວຽກງານ ການປຸກລະດົມໃຫ້ ມີການພັດທະນາ ຮ່ວມກັນແບບ ຍືນຍົງ ແລະ ຫຼີກເວັ້ນບັນຫາຊາຍແດນຕ່າງໆ.

ຈຸດປະສົງຂອງໂຄງການແມ່ນເພື່ອຮັບປະກັນໃຫ້ມີ ການພັດທະນາແຫຼ່ງນໍ້າແບບຍືນຍົງ ແລະ ເພື່ອໃຫ້ບັນລຸຈຸດປະສົງດັ່ງກ່າວ ແມ່ນຕ້ອງໃຊ້ເວລາໃນການປະເມີນ ສະພາບຄວາມສົມດຸນຂອງຊີວິດສັດນໍ້າ ແລະ ແຫຼ່ງຊັບພະຍາກອນທໍາມະຊາດ, ລະບຸເຂດທີ່ປະຊາຊົນ ດໍາລົງຊີວິດສ່ວນຫຼາຍຂຶ້ນກັບ ການຂະຫຍາຍຕົວຂອງສະພາບຄວາມສົມດຸນຂອງຊີວິດສັດນໍ້າ ແລະ ພັດທະນາ ຮູບແບບລະບົບຄວາມສົມດຸນຂອງສັດນໍ້າ ໃນເຂດອ່າງແມ່ນໍ້າຂອງ, ມັນຈະເປັນການສະໜັບສະໜູນ ແລະ ອໍານວຍຄວາມສະດວກໃຫ້ແກ່ການວິໃຈ ແລະ ວຽກງານທີ່ກ່ຽວຂ້ອງ, ເປົ້າໝາຍກໍ່ເພື່ອເສີມຂະຫຍາຍຄວາມເຂົ້າໃຈ ໃນໜ້າ ທີ່ວຽກງານ ແລະ ການເຊື່ອມໂຍງລະບົບນິເວດວິທະຍາຂອງເຂດອ່າງແມ່ນໍ້າຂອງ ແລະ ເພື່ອຊີ້ສານຂໍ້ມູນ ດ້ານນີ້ ຕໍ່ຜູ້ວາງແຜນ, ຜູ້ຄຸ້ມຄອງ, ຜູ້ເຮັດວຽກກ່ຽວກັບດ້ານນະໂຍບາຍ ແລະ ບັນດາຄູ່ຮ່ວມງານທີ່ກ່ຽວຂ້ອງ.

ໂຄງການພັດທະນາອ່າງ ຍັງຈະລວມມີການປັບປຸງແບບແຜນວິທີການປະເມີນ ສະພາບເວດລ້ອມໃນເຂດອ່າງ ແມ່ນໍ້າ ຂອງ ແລະ ໃຫ້ຂໍ້ມູນທາງດ້ານວິທະຍາສາ ກ່ຽວກັບການພົວພັນກັນລະຫວ່າງ ລະບົບການເຄື່ອນໄຫວຂອງສະພາບເວດລ້ອມ (ດ້ານປະລິມານ ແລະ ຄຸນນະພາບ) ແລະ ຊັບພະຍາກອນດ້ານສິ່ງເວດລ້ອມ ໃນເຂດອ່າງແມ່ນໍ້າຂອງ.

ໂຄງການຍັງໄດ້ມີແຜນປັບປຸງ ຄວາມອາດສາມາດ ໃນທຸກວຽກງານຂອງ ການຕິດຕາມ ແລະ ການວິໃຈ ດ້ານສິ່ງເວດລ້ອມ, ການປະເມີນສະພາບເວດລ້ອມ ເພື່ອເສີມສ້າງຈິດສໍານຶກ ແລະ ການເຂົ້າຮ່ວມຂອງ ບັນດາເຈົ້າໜ້າທີ່ລັດທະບານ, ຜູ້ວາງນະໂຍບາຍ ແລະ ບັນດາຄູ່ຮ່ວມງານທີ່ກ່ຽວຂ້ອງ ແນວຄວາມຄິດໃໝ່ດ້ານສິ່ງເວດລ້ອມ, ດ້ານວິຊາການ ແລະ ອຸປະກອນ.

ດຣ ໂອລີເວຍ ໂຄເກນ (Dr Olivier Cogels), ຫົວໜ້າບໍລິຫານງານ ຂອງຄະນະກໍາມາທິການແມ່ນໍ້າຂອງສາກົນ ໄດ້ສະແດງຄວາມຂອບໃຈມາຍັງ ລັດຖະບານ ແຫ່ງປະເທດແດນມາກ ທີ່ມີຈິດໃຈກ້ວາງຂວາງ ທີ່ສືບຕໍ່ໃຫ້ການສະໜັບສະໜູນ ວຽກງານຂອງ ຄມສ ແລະ ທ່ານໄດ້ອະທິບາຍວ່າ ແຜນພັດທະນາອ່າງ ແມ່ນ ເປັນສ່ວນປະກອບທີ່ສໍາຄັນ ຂອງແຜນຍຸດທະສາດ ຂອງ ຄມສ 2006 ຫາ 2010.

"ແຜນຍຸດທະສາດໃໝ່ ຂອງ ຄມສ 2006 ຫາ 2010 ແມ່ນ ກ່ຽວກັບການສົ່ງເສີມ ການນໍາໃຊ້ ຄວາມອາດສາມາດບົ່ມຊ້ອນ ຂອງແມ່ນໍ້າ ເພື່ອການພັດທະນາທີ່ຍືນຍົງ ແລະ ການຂະຫຍາຍຕົວທາງດ້ານເສດຖະກິດ ແຕ່ພວກເຮົາຕ້ອງການໃຫ້ມີຄວາມ ໝັ້ນໃຈວ່າ ມັນແມ່ນການພັດທະນາທີ່ຖືກຕ້ອງ. ການພັດທະນາແບບຍືນຍົງ ແມ່ນ ການສ້າງຄວາມສົມດຸນ, ການມີການວາງ ແຜນລະອຽດ, ເຊິ່ງສາມາດຫຼຸດຜ່ອນຜົນກະທົບດ້ານສິ່ງເວດລ້ອມ ແລະ ສິ່ງທີ່ສໍາຄັນເໜືອສິ່ງອື່ນໃດກໍ່ແມ່ນ ເພື່ອຜົນ ປະໂຫຍດ ຂອງປະຊາຊົນ ໃນເຂດອ່າງແມ່ນໍ້າຂອງ," ທ່ານກ່າວ.

"ຄມສ ມີຈຸດປະສົງ ເພື່ອສົ່ງເສີມ ແລະ ສະໜັບສະໜູນ ການພັດທະນາ ທີ່ເໝາະສົມ, ຍືນຍົງ ແລະ ປະສານຮ່ວມມືກັນ ໂດຍມີການ ວາງແຜນຮ່ວມກັນ ແລະ ປັບປຸງແຜນພັດທະນາອ່າງຢ່າງກ້ວາງຂວາງ ແລະ ດ້ວຍການຊ່ວຍເຫຼືອຂອງ ລັດຖະບານ ຂອງ ປະເທດແດນມາກ, ພວກເຮົາມີຄວາມເຊື່ອໝັ້ນວ່າ ຈະສາມາດບັນລຸເປົ້າໝາຍດັ່ງກ່າວ."

ພະນະທ່ານ ປີເຕີ ລີຊອດທ ແຮນເຊີນ (Mr Peter Lysholt Hansen), ເອກອັກຄະລະລະຊະທູດແຫ່ງປະເທດແດນມາກ ທີ່ ຮ່າໂນ່ຍ ກ່າວວ່າ: "ອ່າງແມ່ນ້ຳຂອງ ແມ່ນແຫຼ່ງຊັບພະຍາກອນທີ່ມີຄວາມສຳຄັນຍິ່ງ ຕໍ່ຊີວິດການເປັນຢູ່ ຂອງປະຊົນທີ່ທຸກຍາກ ນັບລ້ານລ້ານຄົນ ທີ່ອາໃສຢູ່ໃນໂຊງເຂດ. ມັນຈຶ່ງມີຄວາມ ສຳຄັນ ທີ່ຈະຕ້ອງປົກປັກຮັກສາແຫຼ່ງຊັບພະຍາກອນນີ້ໄວ້ ແລະ ມີການວາງແຜນ ລະອຽດໃນການພັດທະນາ ແບບຍືນຍົງ ເພື່ອເຮັດໃຫ້ ອ່າງສາມາດສືບຕໍ່ ໃຫ້ຜົນປະໂຫຍດ ແກ່ປະຊາຊົນທຸກຄົນ ທີ່ດຳລົງຊີວິດໃນເຂດອ່າງ, ໂດຍສະເພາະແມ່ນ ປະຊາຊົນ ຜູ້ທີ່ທຸກຍາກ. ຄມສ ມີບົດບາດທີ່ສຳຄັນ ໃນວຽກງານປົກປ້ອງ ການພັດທະນາແບບຍືນຍົງ ຂອງແມ່ນ້ຳ. ປະເທດແດນມາກ, ເຊິ່ງເປັນຜູ້ໃຫ້ທຶນລາຍໃຫຍ່ທີ່ສຸດ ໃນປະຈຸບັນ ແກ່ໂຄງການ ຂອງ ຄມສ ເຊິ່ງລວມທັງ ແຜນພັດທະນາອ່າງໄລຍະສອງໃນປະຈຸບັນ, ແມ່ນ ມີຄວາມຍິນດີທີ່ຈະ ໃຫ້ການສະໜັບສະໜູນ ຄມສ ແລະ ບັນດາປະເທດສະມາຊິກ ເພື່ອໃນ ບັນລຸຄວາມພະຍາ ຍາມເຫຼົ່ານີ້."


- **ຂໍ້ມູນເພີ້ມເຕີມ ກະລຸນາຕິດຕໍ່ : ເວີຈີເນຍ ແອນດິສັນ** Virginia Addison, **ເຈົ້າໜ້າທີ່ປະຊາສຳພັນ**, Tel: 856 21 263 263 Ext 1122. Mobile: (856) 20 559 9139 Fax: (85621) 263 264 Email: virginia@mrcmekong.org